ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຄະນະພັກຮາກຖານ ທນບ
# ນຳພາສະໜອງແຫຼ່ງທຶນເຂົ້າສູ່ເປົ້າໝາຍຂອງພັກ




ກອງປະຊຸມໃຫຍ່ ສະມາຊິກພັກ ຄັ້ງທີ II ຂອງຄະນະພັກຮາກຖານ ທະນາຄານນະໂຍບາຍ (ທນບ) ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມໃນວັນທີ 28 ກຸມພາ 2020 ທີ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ (ທຫລ) ນະຄອນຫຼວງວຽງຈັນພາຍໃຕ້ການເປັນປະທານຂອງສະຫາຍ ວຸດທິ ເລື່ອນວິໄລວົງ ກຳມະການພັກ ທຫລ, ເລຂາຄະນະພັກຮາກຖານ-ຜູ້ອຳນວຍການ ທນບ ແລະ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ,ເລຂາຄະນະພັກ-ຜູ້ວ່າການ ທຫລ; ພ້ອມນີ້, ກໍ່ມີສະຫາຍ ພານຸສັກ ແກ່ນວົງພະຈັນ ກຳມະການພັກ-ຫົວໜ້າກົມຈັດຕັ້ງແລະພະນັກງານ ທຫລ, ຜູ້ຕາງໜ້າຄະນະພັກຮາກຖານ, ຄະນະໜ່ວຍພັກ, ຜູ້ແທນສົມບູນ ແລະ 3 ອົງການຈັດຕັ້ງມະຫາຊົນ ທນບ ເຂົ້າຮ່ວມ.

ກອງປະຊຸມໃຫຍ່ ໄດ້ຜ່ານຮ່າງບົດລາຍງານການເມືອງທີ່ສ່ອງແສງໃຫ້ເຫັນການປະຕິບັດແນວທາງນະໂຍບາຍຂອງພັກ-ລັດໃນການສະໜອງສິນເຊື່ອຊຸກຍູ້ການຜະລິດປະກອບສ່ວນແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃນທົ່ວປະເທດຕະຫຼອດໄລຍະ 5 ປີ (2015-2019) ຜ່ານມາ ຊຶ່ງພາຍໃຕ້ການຊີ້ນຳ-ນຳພາຂອງຄະນະພັກຮາກຖານ ທນບ ເຂົ້າໃນການປະຕິບັດໜ້າທີ່ການເມືອງ ສາມາດມີຜົນສຳເລັດຫຼາຍດ້ານ, ມີຫຼາຍເມືອງ, ຫຼາຍໝູ່ບ້ານ ແລະ ຫຼາຍຄອບຄົວໄດ້ຫຼຸດພົ້ນອອກຈາກຄວາມທຸກຍາກ. ຄະນະພັກຮາກຖານ ທນບ ໄດ້ຖືເອົາການສຶກສາອົບຮົມການເມືອງ, ນຳພາແນວຄິດເປັນບັນຫາກົກ ແລະ ສອດທ້ອຍເຂົ້າໃນທຸກວຽກງານດ້ວຍຫຼາຍຮູບການເຮັດໃຫ້ສະພາບແນວຄິດຂອງສະມາຊິກພັກ-ພະນັກງານມີຄວາມສະຫງົບ, ມີການຫັນປ່ຽນທີ່ດີຂຶ້ນ, ມີຄຸນທາດການເມືອງ, ມີສະຕິຕໍ່ການຈັດຕັ້ງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ.






ດ້ານວິຊາສະເພາະ ມາຮອດທ້າຍເດືອນ 12/2019 ມີຍອດເຫຼືອສິນເຊື່ອ 2.936,51 ຕື້ ກີບທຽບໃສ່ປີ 2015 ເພີ່ມຂຶ້ນ 23%; ໃນນີ້, ເປັນເງິນໄລຍະສັ້ນ 267,07 ຕື້ກີບ, ໄລຍະກາງ 764,87 ຕື້ກີບ ແລະ ໄລຍະຍາວ 1.904,57 ຕື້ກີບ ຊຶ່ງສິນເຊື່ອດັ່ງກ່າວກວມເອົາຂະແໜງປູກຝັງ 944,03 ຕື້ກີບ ເພີ່ມຂຶ້ນ 17,27% ກວມເອົາ 32,15% ຂອງຍອດສິນເຊື່ອທັງໝົດ, ມີ 57 ໂຄງການໃນນີ້ໂຄງການພົ້ນເດັ່ນແມ່ນການປູກເຂົ້າມີເນື້ອທີ່ທັງໝົດ 146.182 ເຮັກຕາ ຮັບຜົນຜະລິດ 438.546 ໂຕນ; ປູກມັນຕົ້ນ 53.370 ເຮັກຕາ ຜົນຜະລິດ 800.550 ໂຕນ; ປູກສາລີ 325.169 ເຮັກຕາຜົນຜະລິດ 1.300.676 ໂຕນ. ຂະແໜງລ້ຽງສັດ 1.712,18 ຕື້ກີບ ເພີ່ມຂຶ້ນ 60,50% ກວມເອົາ 58,31% ຂອງຍອດສິນເຊື່ອທັງໝົດ, ມີ108 ໂຄງການ ແລະ ໂຄງການພົ້ນເດັ່ນມີລ້ຽງສັດໃຫຍ່ (ງົວ+ຄວາຍ) 426.773 ໂຕ, ລ້ຽງໝູແບບຟາມ ແລະ ຄອກ 863.301 ໂຕ, ແບ້ 141.730 ໂຕ; ສະໜອງທຶນລ້ຽງປາ, ເປັດ, ໄກ່ ແລະ ອື່ນໆ ເປັນຈຳນວນຫຼາຍ.

ດ້ານຂະແໜງຫັດຖະກຳ 35,78 ຕື້ກີບ ເພີ່ມຂຶ້ນ 40,64% ກວມເອົາ 1,22% ຂອງຍອດສິນເຊື່ອທັງໝົດ; ມີ 14 ໂຄງການ. ຂະແໜງອຸດສາຫະກຳປຸງແຕ່ງ 83,70 ຕື້ກີບ ຫຼຸດລົງ 7,69%, ກວມເອົາ 2,85% ຂອງຍອດສິນເຊື່ອທັງໝົດ. ຂະແໜງບໍລິການ-ເກັບຊື້ຜົນຜະລິດ 160,78 ຕື້ກີບ ຫຼຸດລົງ 57,85 ກວມເອົາ 5,48% ຂອງຍອດສິນເຊື່ອທັງໝົດ ແລະ ກ່ຽວກັບສິນເຊື່ອແຍກຕາມຂົງເຂດການເຄື່ອນໄຫວມີສິນເຊື່ອເມືອງເປົ້າໝາຍ 1.903,10 ຕື້ກີບ ເທົ່າກັບ 64,81% ຂອງຍອດສິນເຊື່ອທັງໝົດ; ກວມເອົາ 17 ແຂວງ, 1 ນະຄອນຫຼວງມີ 72 ເມືອງ, 3.505 ບ້ານ, ຈັດຕັ້ງກຸ່ມກູ້ຢືມ 25.883 ກຸ່ມ, ຄອບຄົວເຂົ້າເຖິງທັງໝົດ 189.861 ຄອບຄົວ. ສິນເຊື່ອຈຸດສຸມລັດຖະບານ-ທ້ອງຖິ່ນ 320,28 ຕື້ກີບ ເທົ່າກັບ 10,91% ຂອງຍອດສິນເຊື່ອທັງໝົດ; ກວມເອົາ 17 ແຂວງ, 1 ນະຄອນຫຼວງ, 60 ເມືອງ, 66 ຈຸດສຸມ, 449 ບ້ານ, ຈັດຕັ້ງກຸ່ມກູ້ຢືມໄດ້ 3.488 ກຸ່ມ, 28.259 ຄອບຄົວ. ສິນເຊື່ອບ້ານ 3 ສ້າງ 296,38 ຕື້ກີບ ເທົ່າກັບ 10,09% ຂອງຍອດສິນເຊື່ອທັງໝົດ; ກວມເອົາ 17 ແຂວງ, 1 ນະຄອນຫຼວງ, 78 ເມືອງ, ຈຳນວນ 193 ບ້ານ, ຈັດຕັ້ງກຸ່ມກູ້ຢືມໄດ້ 3.851 ກຸ່ມ, ປະຊາຊົນເຂົ້າເຖິງແຫຼ່ງທຶນ 32.671 ຄອບຄົວ. ສິນເຊື່ອສົ່ງເສີມການຜະລິດສິນຄ້າ 416,75 ຕື້ກີບເທົ່າກັບ 14,19% ຂອງຍອດສິນເຊື່ອທັງໝົດ.

ຄະນະພັກຮາກຖານ ທນບ ໄດ້ໝູນໃຊ້ບົດຮຽນຈາກທະນາຄານນະໂຍບາຍ-ສັງຄົມຫວຽດນາມໃນການປ່ອຍສິນເຊື່ອຜ່ານອົງການຈັດຕັ້ງການເມືອງ-ສັງຄົມ ແລະ ກອງທຶນບ້ານຢູ່ໜ່ວຍບໍລິການທີ່ມີເງື່ອນໄຂມີທັງໝົດ 5 ສາຂາ, 6 ເມືອງ, 7 ບ້ານ, 37 ກຸ່ມ 297 ຄອບຄົວ, 4 ເປົ້າໝາຍ, ເປັນວົງເງິນ 6,33 ຕື້ກີບ ມີການຊຳລະໜີ້ໄດ້ດີ. ຜ່ານການຈັດຕັ້ງປະຕິບັດການສະໜອງສິນເຊື່ອຜ່ານມາໄດ້ມີໂຄງການທີ່ພົ້ນເດັ່ນທັງໝົດ 187 ໂຄງການ ແລະ ມີຄອບຄົວຕົວແບບຜະລິດເປັນສິນຄ້າ 191 ຄອບຄົວ. ຜ່ານການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ I ຂອງຄະນະພັກຮາກຖານ ທນບ ໄດ້ມີຜົນສຳເລັດໃນການສະໜອງສິນເຊື່ອປະກອບສ່ວນແກ້ໄຂຄວາມທຸກຍາກໃຫ້ປະຊາຊົນບັນດາເຜົ່າ ເຮັດໃຫ້ບ້ານທຸກຍາກຫຼຸດລົງຈາກປີ 2015 (1.736 ບ້ານ) ຫຼຸດລົງ 200 ບ້ານ ເທົ່າກັບ 12% ຂອງບ້ານທຸກຍາກ. ປະຈຸບັນຍັງເຫຼືອ 1.536 ບ້ານເທົ່າກັບ 18% ຂອງບ້ານທັງໝົດທົ່ວປະເທດ; ຄອບຄົວທຸກຍາກຫຼຸດລົງຈາກປີ 2015 (76.604 ຄອບຄົວ) ຈຳນວນ 12.011 ຄອບຄົວເທົ່າກັບ 16%, ຄອບຄົວທຸກຍາກປະຈຸບັນ 64.593 ຄອບຄົວ ເທົ່າກັບ 5,34% ຂອງຄອບຄົວທັງໝົດທົ່ວປະເທດ.




ທິດທາງລວມ ແລະ ໜ້າທີ່ຕົ້ນຕໍໃນ 5 ປີ ຕໍ່ໜ້ານີ້ຍັງຈະສືບຕໍ່ນຳພາວຽກງານການເມືອງ-ແນວຄິດເພື່ອຍົກລະດັບຄວາມຮັບຮູ້ຕໍ່ແນວທາງຂອງພັກ, ແຜນນະໂຍບາຍຂອງລັດ ແນໃສ່ສ້າງຄວາມເປັນເອກະພາບທາງດ້ານແນວຄິດ, ທັດສະນະ ແລະ ການກະທຳໃນການຈັດຕັ້ງປະຕິບັດຕົວຈິງ; ຍົກສູງຄຸນທາດການເມືອງ, ລະດັບຄວາມຮູ້-ຄວາມສາມາດຂອງສະມາຊິກພັກຂັ້ນຕົ່ນ ເຮັດໃຫ້ການຈັດຕັ້ງພັກມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ. ສືບຕໍ່ສະໜອງທຶນປະກອບສ່ວນແກ້ໄຂຄວາມທຸກຍາກຂອງປະຊາຊົນເຂົ້າສູ່ລວງເລິກຕິດພັນກັບການພັດທະນາຊົນນະບົດຮອບດ້ານ ແລະ ວຽກງານ 3 ສ້າງ, ດ້ວຍການຂະຫຍາຍຕາໜ່າງການບໍລິການໃນເປົ້າໝາຍຄວາມຮັບຜິດຊອບ, ບໍລິການຮັບເງິນຝາກ, ຈ່າຍເງິນເດືອນໃຫ້ພະນັກງານ ແລະ ຮັບຊຳລະຄ່າສາທາລະນຸປະໂພກໃນບັນດາເມືອງທີ່ບໍ່ມີທະນາຄານທຸລະກິດຕັ້ງຢູ່ເພື່ອເຮັດໃຫ້ປະຊາຊົນທີ່ທຸກຍາກສາມາດເຂົ້າເຖິງແຫຼ່ງທຶນ ແລະ ການນຳໃຊ້ການບໍລິການໄດ້ຢ່າງທົ່ວເຖິງ.

ກອງປະຊຸມໃຫຍ່ໃນຄັ້ງນີ້ ໄດ້ດຳເນີນການເລືອກຕັ້ງເອົາຄະນະພັກຮາກຖານຊຸດໃໝ່ໂດຍປະກອບດ້ວຍ 7 ສະຫາຍ, ຍິງ 1 ສະຫາຍໂດຍສະຫາຍ ວຸດທິ ເລື່ອນວິໄລວົງ ໄດ້ຮັບການເລືອກເປັນເລຂາຄະນະພັກຮາກຖານ ທນບ; ສະຫາຍ ຄຳອິ້ນ ຈັນສຸລິມາດ ເປັນຮອງເລຂາ ແລະ ສະຫາຍ ແສງເພັດ ດວງພິລາ ເປັນປະທານກວດກາ ແລະ ໄດ້ເລືອກເອົາຜູ້ແທນສົມບູນ 6 ສະຫາຍ ແລະ ສຳຮອງ 2 ສະຫາຍ ເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງທີ IV ທີ່ຈະເປີດຂຶ້ນໃນຕໍ່ໜ້ານີ້.

ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຂອງສະຫາຍເລຂາຄະນະພັກ ທຫລ ທີ່ໄດ້ຕີລາຄາສູງຕໍ່ການນຳພາ - ຊີ້ນຳຂອງສະຫາຍຄະນະພັກຮາກຖານ ທນບ ກໍ່ຄືສະມາຊິກພັກທີ່ສາມາດຍາດໄດ້ຜົນງານອັນພົ້ນເດັ່ນໃນຫຼາຍດ້ານ ເປັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານໃນແຕ່ລະໄລຍະ; ພ້ອມນັ້ນ ກໍ່ຕ້ອງເສີມຂະຫຍາຍຜົນງານທີ່ດີເດັ່ນໃນຕໍ່ໜ້າໂດຍຖືເອົາວຽກງານສຶກສາອົບຮົມການເມືອງ-ນຳພາແນວຄິດ ເປັນວຽກໜຶ່ງທີ່ສຳຄັນ, ຢືນຢູ່ແຖວໜ້າຂອງທຸກວຽກງານ, ເປັນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຂອງຄະນະພັກແຕ່ລະຂັ້ນ;ອອກແຮງປັບປຸງກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຖືເອົາວຽກງານດັ່ງກ່າວ ເປັນໃຈກາງແຫ່ງການນຳພາຂອງຄະນະພັກທຸກຂັ້ນ;ສືບຕໍ່ປັບປຸງກົນໄກການສະໜອງ-ການຄຸ້ມຄອງເຊື່ອໃຫ້ຮັບປະກັນຄຸນນະພາບ, ຕ້ອງຄົ້ນຄວ້າວິເຄາະ, ສ້າງແຜນສິນເຊື່ອ ເພື່ອຊອກຫາແຫຼ່ງທຶນ ແລະ ກະຈາຍແຫຼ່ງທຶນໃຫ້ສອດຄ່ອງກັບນະໂຍບາຍການດຳເນີນງານຂອງທະນາຄານ, ສ້າງໂຄງການລົງທຶນສິນເຊື່ອຊຸກຍູ້ການຜະລິດເພື່ອເປັນສິນຄ້າ ແລະ ການພັດທະນາຊົນນະບົດ ແນໃສ່ຫຼຸດຜ່ອນຄວາມທຸກຍາກ ເທື່ອລະກ້າວ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ